ຂໍຂອບໃຈນຳອ້າຍໜູ ນິຣາວັນສຳລັບຄຳ
ອ່ວຍພອນໃນວັນແມ່ ຂໍພອນນີ້ຈົ່ງກັບຄືນສູ່
ຍານາງ ແກ້ວ ນິຣາວັນ ຜູ້ທີ່ມີພາລະໃນການ
ເປັນແມ່ຂອງລູກ, ແລະຂໍໃຫ້ສຸພາບສັຕຣີທຸກໆ
ທ່ານຂອງຊາວຫຼັກເຈັດຈົ່ງມີແຕ່ຄວາມສຸກກາຍ
ສະບາຍໃຈຕະລອດໄປເທີ້ນ.

ທ່ານໜູເອີຍ
ພອນຈາກໃຈອ້າຍແທ້ | ເຖິງຍາແມ່ສາວຫຼັກເຈັດ
ເຮັດໃຫ້ໃຈມານດາ | ຊື່ນຊຸຣາລືມເອົ້າ
ໃຈເຄີຍໂສກາເສົ້າ | ຫງອຍເຫງົາກໍເລີຍສວ່າງ
ສຸຂໃນຊວງລາບລົ້ນ | ໃນຄືນນີ້ແມ່ຊື່ນໃຈ ແທ້ເດ

ຂໍພອນນີ້ຈົ່ງໄດ້ | ກັບຕ່າວຄືນຫາ
ຜົລຍາຂອງໜູ | ຄູ່ສົມພານແທ້
ແມ່ທີ່ດີເພິ່ນຄຽງຂ້າງ | ທາງສາມີແລະລູກອ່ອນ
ອີກນຶ່ງ ຂໍແຖມພອນຢູ່ທີ່ນີ້ | ຫຼັກເຈັດພີ້ເພື່ອນຜູ້ຍິງ ໝູ່ເອີຍ

ໃຈຈິງຂໍຝາກໃຫ້ | ແກ່ເອື້ອຍໃຫຽ່ອາຈານສອນ
ສີພົນດອນພອນມາ | ໃຫ້ສ່ອງສີແສງກ້າ
ຝູງໝູ່ມານດາເຈົ້າ | ຫຼັກເຈັດເຮົານາງຮ້ອງສົ່ງ
ຈົ່ງຄ່ອຍສຸຂຢູ່ສ້າງ | ສະບາຍບ້າງຕະລອດໄປ

ຄິດຫຮັງແມ່ຈິ່ງໄດ້ ສົມດັ່ງມະໂນໜມາຍ
ທັງບຸດຊາຍບຸດຍິງ ໃຫ້ໜັ່ນມາຫລິງເຈົ້າ
ເງິນທອງໄຫຼມາເຂົ້າ ມະໂນເນົາແຕ່ຄວາມຊື່ນ
ຄຳວ່າ ແມ່ ຈິ່ງຢັ້ງຢືນ ໜັ້ນຍື່ນຄູ່ທ້ອງຟ້າ ນະພາກ້ວາງກວບຕະພີ
ແມ່ເອີຍ

ຈາກໃຈຈິງຂອງສາວຫຼັກເຈັດ ( ສີພັນດອນ ສີດາວົງ)